ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມອຸດສາຫະກຳ

ເລກທີ່ 664 /ອຄ.ກອກ.

ນະຄອນຫຼວງວຽງຈັນ, ວັນທີ 08 ຕຸລາ 2008

# ແຈ້ງການ

*ເຖິງ :* ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນທົ່ວປະເທດ.

*ເລື່ອງ:* ການຄຸ້ມຄອງດ້ານສິ່ງແວດລ້ອມສຳລັບໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ.

- ອີງຕາມກົດໝາຍວ່າດ້ວຍໂຮງງານອຸດສາຫະກຳປຸງແຕ່ງ.
- ອີງຕາມກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ແລະ ດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປົກຮັກສາສິ່ງແວດລ້ອມ.
- ອີງຕາມຂໍ້ຕົກລົງວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສຳລັບອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ສະບັບເລກທີ່ 1222/ອຫ, ລົງວັນທີ່ 07 ທັນວາ 2005.

ກົມອຸດສາຫະກຳອອກແຈ້ງການສະບັບນີ້ເຖິງພະແນກອຸດສາຫະກຳ ແລະ ການຄ້າໃນຂອບເຂດທົ່ວປະເທດເພື່ອເປັນເຈົ້າການໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ໃນການຄຸ້ມຄອງສິ່ງແວດລ້ອມໂຮງງານອຸດສາຫະກຳປຸງແຕ່ງ ຕາມລະບຽບການລວມ ແລະ ລະບຽບການຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ທີ່ໄດ້ປະກາດໃຊ້ໄປແລ້ວນັ້ນໃຫ້ສອດຄອງ, ມີຄວາມເປັນເອກະພາບ ແລະ ເຂັ້ມງວດກ່ຽວກັບການອອກໃບຢັ້ງຢືນດ້ານສິ່ງແວດລ້ອມສຳລັບໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງຄື:

01. ໂຮງງານອຸດສາຫະກຳປຸງແຕ່ງທີ່ມີຂະໜາດໃຫຍ່, ມີຜົນກະທົບຕໍ່ສິ່ງແວດລ້ອມສູງ (ລາຍລະອຽດໃຫ້ເບິ່ງຕາມເອກະສານຊ້ອນທ້າຍ 1 ໃນຂໍ້ຕົກລົງເລກທີ່ 1222). ຕ້ອງໄດ້ເຮັດບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ(EIA), ແຕ່ຂະແໜງການອຸດສາຫະກຳ ແລະ ການຄ້າຕ້ອງເປັນຜູ້ຕິດແທດໂດຍກົງແຕ່ຫົວທີກັບຜູ້ພັດທະນາ ຫຼື ຜູ້ທີ່ເຮັດໜ້າທີ່ຂຽນບົດປະເມີນເພື່ອແນະນຳທາງດ້ານລະບຽບຫຼັກການ, ພາຍຫຼັງສຳເລັດຂັ້ນຕອນການປະເມີນຜູ້ພັດທະນາຕ້ອງສົ່ງເອກະສານໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າເພື່ອຄົ້ນຄ້ວາປະກອບຄຳເຫັນ ແລະ ສາມາດຈັດກອງປະຊຸມປຶກສາຫາລື, ຖ້າຫາກເອກະສານຄົບຖ້ວນ, ເນື້ອໃນສົມບູນແລ້ວຈຶ່ງຢືນເອກະສານພ້ອມດ້ວຍຄຳເຫັນເປັນລາຍລັກອັກສອນສົ່ງໃຫ້ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມເປັນຜູ້ອອກໃບຢັ້ງຢືນ.

02. ໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ຂະໜາດກາງ ແລະ ນ້ອຍທີ່ມີຜົນກະທົບຕໍ່ສິ່ງແວດລ້ອມໃນລະດັບກາງລົງມາ(ລາຍລະອຽດໃຫ້ເບິ່ງຕາມເອກະສານຊ້ອນທ້າຍ 1 ໃນຂໍ້ຕົກລົງເລກທີ່ 1222), ຕ້ອງໄດ້ເຮັດບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນ(IEE) ຫຼື ແຜນການຄຸ້ມຄອງສິ່ງແວດລ້ອມ(EMP)ຕາມແຕ່ລະກໍ

ລະບົບ. ຂະແໜງອຸດສາຫະກຳ ແລະ ການຄ້າມີໜ້າທີ່ຮັບຜິດຊອບໃນການພິຈາລະນາອອກໃບຢັ້ງຢືນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນ(IEE) ແລະ ແຜນການຄຸ້ມຄອງສິ່ງແວດລ້ອມ(EMP). ສຳລັບໂຮງງານໃດທີ່ໄດ້ເຮັດບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນ ຕ້ອງໄດ້ສ້າງໜ່ວຍງານ ເພື່ອຮັບຜິດຊອບວຽກງານດ້ານສິ່ງແວດລ້ອມ.

03. ການແບ່ງຂັ້ນຄຸ້ມຄອງສຳລັບການອອກໃບຢັ້ງຢືນດ້ານສິ່ງແວດລ້ອມລະຫວ່າງຂັ້ນສູນກາງ ແລະ ທ້ອງຖິ່ນພາຍໃນຂະແໜງອຸດສາຫະກຳ ແລະ ການຄ້າໃຫ້ປະຕິບັດດັ່ງນີ້: ໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງທີ່ຂັ້ນພະແນກເປັນຜູ້ຄົ້ນຄ້ວາ ແລະ ອອກໃບອະນຸຍາດດຳເນີນກິດຈະການໂຮງງານແມ່ນມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງເປັນຜູ້ພິຈາລະນາອອກໃບຢັ້ງຢືນຕໍ່ບົດ IEE ຫຼື EMP ເລີຍ. ສ່ວນໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ທີ່ກົມອຸດສາຫະກຳເປັນຜູ້ອອກໃບອະນຸຍາດດຳເນີນກິດຈະການໂຮງງານແມ່ນຂັ້ນກົມອຸດສາຫະກຳເປັນຜູ້ພິຈາລະນາອອກໃບຢັ້ງຢືນຕໍ່ບົດ IEE ຫຼື EMP, ແຕ່ການຍື່ນເອກະສານຕ້ອງຜ່ານພະແນກອຸດສາຫະກຳ ແລະ ການຄ້າແຂວງ ຫຼື ນະຄອນຫຼວງ ກ່ອນຕາມຂັ້ນຕອນ.

04. ການປະກອບເອກະສານທຸກຄັ້ງຈະແມ່ນຂັ້ນພະແນກ ຫຼື ກົມອຸດສາຫະກຳ ເປັນຜູ້ພິຈາລະນາກໍ່ຕາມຕ້ອງປະກອບເປັນ 03 ຊຸດ: 1 ຊຸດສຳເນົາພະແນກ, 1 ຊຸດສົ່ງໃຫ້ໂຮງງານ ແລະ ອີກ 1 ຊຸດສົ່ງໃຫ້ກົມອຸດສາຫະກຳ) ເພື່ອຕິດຕາມກວດກາ(ສຳລັບຂໍ້ແນະນຳໃນການຂຽນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ແຜນການຄຸ້ມຄອງສິ່ງແວດລ້ອມແມ່ນໃຫ້ເບິ່ງຕາມເອກະສານຊ້ອນທ້າຍ 2 ແລະ 3 ໃນຂໍ້ຕົກລົງເລກທີ່ 1222).

05. ສ່ວນການຕິດຕາມກວດກາດ້ານສິ່ງແວດລ້ອມໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງພາກປົກກະຕິແມ່ນພາລະບົດບາດຂອງຂະແໜງອຸດສາຫະກຳ ແລະ ການຄ້າ, ສ່ວນອົງການຊັບພະຍາກອນນ້ຳ ແລະ ສິ່ງແວດ ລ້ອມແມ່ນຕິດຕາມກວດກາເປັນໄລຍະທີ່ເຫັນວ່າມີຄວາມຈຳເປັນ.

ສະນັ້ນ, ຈິ່ງຖືເປັນກຽດແຈ້ງການມາຍັງທ່ານ ເພື່ອຈັດຕັ້ງປະຕິບັດຕາມຄວາມເໝາະສົມດ້ວຍ.

ຫົວໜ້າກົມອຸດສາຫະກຳ

ຫວ່າງ ພົມມະສັກ

<u>ໝາຍເຫດ</u>:

- ສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່ໝາຍເລກໂທລະສັບ:

ທ່ານ ສົມພອງ ສຸລິວັນ 5697742 ຫຼື

ທ່ານ ຄຳພອນ ແກ້ວດາລາວົງ 5614832